ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 091 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 27.03.2009

## ດຳລັດ

## ວ່າດ້ວຍ ການສ້າງຕັ້ງ ມະຫາວິທະຍາໄລ ສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 / 05 / 2003.
- ອີງຕາມ ກົດໝາຍ ວ່າດ້ວຍ ການສຶກສາ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 03 /0 7 / 2007.
- ອີງຕາມ ການສະເໜີຂອງລັດຖະມົນຕີວ່າການ ກະຊວງສຶກສາທິການ ສະບັບເລກທີ 229/ສສ, ລົງວັນທີ 16 / 03 / 2009.

**ນາຍົກລັດຖະມົນຕີ ອອກດຳລັດ:**

ມາດຕາ 1: ສ້າງຕັ້ງ ມະຫາວິທະຍາ ໄລສະຫວັນນະເຂດ, ຊຶ່ງມີທີ່ຕັ້ງຢູ່ເມືອງ ໄກສອນ ພົມວິຫານ ແຂວງສະຫວັນນະເຂດ.

ມາດຕາ 2: ມະຫາວິທະຍາໄລ ສະຫວັນນະເຂດ ແມ່ນຢູ່ພາຍໃຕ້ການຊີ້ນຳໂດຍກົງ ທາງດ້ານວິຊາການ ຈາກມະຫາວິທະຍາໄລແຫ່ງຊາດ, ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງສຶກສາທິການ; ແຂວງສະຫວັນນະເຂດ ຮັບພາລະດ້ານສະຖານທີ່, ອຸປະກອນການຮຽນ-ການສອນ, ອາຈານສອນຂັ້ນພື້ນຖານ, ງົບປະມານ ແລະ ເງື່ອນໄຂສະດວກອື່ນໆ.

ມາດຕາ 3: ສຳນັກງານນາຍົກລັດຖະມົນຕີ, ຄະນະຈັດຕັ້ງສູນກາງ, ບັນດາກະຊວງ, ອົງການທຽບເທົ່າ, ມະຫາວິທະຍາໄລແຫ່ງຊາດ, ນະຄອນຫຼວງວຽງຈັນ, ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 4: ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ມີລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ